# ແກມຊິວ

## ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ

### ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດກິດຈະກຳ 6 ເດືອນຕົ້ນປີ ແລະ ວາງແຜນການ 6 ເດືອນທ້າຍປີ 2025

ໃນວັນທີ 10 ກັນຍາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດກອງປະຊຸມສະຫຼຸບ 6 ເດືອນຕົ້ນປີ ແລະ ວາງແຜນການ 6 ເດືອນທ້າຍປີ 2025 ຂອງໂຄງການ GAMCIL ທີ່ນະຄອນຫຼວງວຽງຈັນ ໂດຍການເປັນປະທານຮ່ວມ ຂອງທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ທ່ານ ນາງ ໄພວັນ ຈັນງ່າຄຳ, ອຳນວຍການຝ່າຍແຜນງານ, ອົງການແຄຣ໌ ລາວ ພ້ອມດ້ວຍຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ລວມທັງໝົດ 28 ຄົນ, ຍິງ 7 ຄົນ. ພາຍໃນກອງປະຊຸມແມ່ນໄດ້ມີການສະຫຼຸບ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງໂຄງການ ໃນ 3 ແຂວງ ເປົ້າໝາຍກໍຄືນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງຈຳປາສັກ ໃນໄລຍະທີ່ຜ່ານມາ. ນອກຈາກນັ້ນ, ຜູ້ເຂົ້າຮ່ວມທຸກທ່ານ ກໍຍັງໄດ້ມີປະກອບຄຳຄິດເຫັນ ແລະ ໃຫ້ຄຳແນະນຳ ສຳລັບການດຳເນີນກິດຈະກຳໃນຕໍ່ໜ້າອີກ 6 ເດືອນ ເພື່ອວາງແຜນການຈັດຕັ້ງປະຕິບັດກິດຈະກຳ ໃຫ້ມີຄວາມແທດເໝາະ ແລະ ບັນລຸຕາມຈຸດປະສົງຂອງໂຄງການ ໂດຍສະເພາະແມ່ນການຝຶກອົບຮົມທີ່ກຳລັງດຳເນີນ ແລະ ການປະກວດການແຂ່ງຂັນຜະລິດສື່ສີຂຽວທີ່ຈະເລີ່ມຂຶ້ນໃນໄວໆນີ້











## ກອງປະຊຸມຜູ້ປະສານງານຂັ້ນແຂວງ ຂອງໂຄງການ



ໃນວັນທີ 10 ກັນຍາ 2025 ໄດ້ມີການສົນທະນາກ່ຽວກັບຜົນສຳເລັດຂອງການຮ່ວມມືໃນໄລຍະຜ່ານມາ ແລະ ຫາລືກ່ຽວກັບສິ່ງທ້າທາຍຕ່າງໆ ລວມໄປເຖິງ ການປຶກສາຫາລືແນວທາງສູ່ຄວາມສຳເລັດໃນອະນາຄົດ.

ຜູ້ເຂົ້າຮ່ວມ 12 ຄົນ, ຍິງ 3 ຄົນ ໄດ້ປຶກສາຫາລືກັນຢ່າງລະອຽດກ່ຽວກັບແຜນດຳເນີນກິດຈະກຳໃນຕໍ່ໜ້າ ເພື່ອຮັບປະກັນວ່າໂຄງການຈະດຳເນີນໄປຢ່າງ ມີປະສິດທິຜົນ ແລະ ທັນກັບເວລາ.



ແຜນການດັ່ງກ່າວແມ່ນໄດ້ເນັ້ນໃສ່ ກຳນົດທິດທາງເພື່ອບັນລຸເປົ້າໝາຍທີ່ວາງໄວ້ໃຫ້ສຳເລັດຕາມກຳນົດ, ວາງແຜນເພີ່ມການເຂົ້າເຖິງ ແລະ ຂະຫຍາຍຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ, ສຸມໃສ່ການຜະລິດສື່ທີ່ມີຄຸນນະພາບ ແລະ ປັບປຸງກົນໄກການສື່ສານໃຫ້ ວ່ອງໄວຂຶ້ນ ໃນທຸກຂັ້ນຕອນການຈັດຕັ້ງປະຕິບັດ.






## ກອງປະຊຸມ ຄະນະກຳມະການຄຸ້ມຄອງໂຄງການ GAMCIL



ວັນທີ 12 ກັນຍາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດກອງປະຊຸມ ຄະນະກຳມະການຄຸ້ມຄອງໂຄງການ ຢູ່ທີ່ ນະຄອນຫຼວງວຽງຈັນ ເຊິ່ງມີ ທ່ານ ສະຫວັນຄອນ ຣາຊມຸນຕຣີ, ປະທານສະມາຄົມນັກຂ່າວ ແຫ່ງ ສປປ ລາວ, ທ່ານ ນາງໄພວັນ ຈັນງ່າຄຳ, ອຳນວຍການຝ່າຍແຜນງານ, ອົງການແຄຣ໌ ລາວ ແລະ ຄະນະຜູ້ແທນຈາກສະຫະພາບ ເອີຣົບ ປະຈຳ ສປປ ລາວ, ທ່ານ ນາງ ຄາລ້າ ດາ ຊິວເວີ້ ໄລຊເກີ, ຕ່າງໜ້າຈາກກົມສື່ມວນຊົນ ພ້ອມດ້ວຍພະນັກງານໂຄງການ ແລະ ອົງການແຄຣ໌ ເຂົ້າຮ່ວມ ທັງໝົດ 11 ຄົນ, ຍິງ 6 ຄົນ.



ກອງປະຊຸມ ແມ່ນໄດ້ມີການລາຍງານຜົນການຜົນສຳເລັດຂອງການຈັດຕັ້ງກິດຈະກຳ ໃນພື້ນທີ່ເປົ້າໝາຍຂອງໂຄງການ ແລະ ຍັງໄດ້ປຶກສາຫາລືກ່ຽວກັບສິ່ງທ້າທາຍ ແລະ ແຜນການດຳເນີນກິດຈະກຳໃນຕໍ່ໜ້າໃຫ້ທັນກັບເວລາ ແລະ ມີປະສິດທິພາບຫຼາຍຂຶ້ນ






## ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວໃຫ້ແກ່ອົງການຈັດຕັ້ງສັງຄົມລາວ.

ໃນວັນທີ 15 - 19 ກັນຍາ ແລະ 29 ກັນຍາ - 3 ຕຸລາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການ ແຄຣ໌ ລາວ ຈັດຊຸດຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ ອົງການຈັດຕັ້ງສັງຄົມລາວ ພາຍໃຕ້ໂຄງການ GAMCIL ທີ ນະຄອນຫຼວງວຽງຈັນ. ມີຜູ້ເຂົ້າຮ່ວມ 78 ຄົນ ຍິງ 39 ຄົນ ຈາກ 35 ສະມາຄົມ ໃນທົ່ວປະເທດ.



ຈຸດປະສົງກໍແມ່ນເພື່ອ ເພີ່ມຄວາມຮູ້ໃນການລາຍງານຂ່າວກ່ຽວກັບບັນຫາສິ່ງແວດລ້ອມ ເພື່ອຊ່ວຍໃຫ້ສາມາດສ້າງເນື້ອຫາ ກ່ຽວກັບການພັດທະນາສີຂຽວໄດ້ຢ່າງລະອຽດ, ຈັນຍາບັນນັກຂ່າວ, ຄວາມສຳຄັນຂອງບົດບາດທາງເພດ ແລະ ສິດທິໃນຍຸກດິຈິຕອນ, ການນຳໃຊ້ເຄື່ອງມືດິຈິຕອນໃນການຜະລິດເນື້ອຫາ ແລະ ການເຜີຍແຜ່ເນື້ອຫາອອກສູ່ສັງຄົມອອນລາຍໃຫ້ມີຄວາມປອດໄພ.



ຜົນໄດ້ຮັບແມ່ນສາມາດຜະລິດເນື້ອຫາທີ່ເປັນໂປສເຕີ້ ແລະ ວິດີໂອ ທີ່ຕິດພັນກັບບັນຫາສີຂຽວ, ສາມາດຜະລິດເນື້ອຫາໂດຍການນຳໃຊ້ເຄື່ອງມືດິຈິຕອນເຂົ້າມາຊ່ວຍ ແລະ ນຳສະເໜີບົດໄດ້ຢ່າງມີປະສິດທິພາບ. ບົດດັ່ງກ່າວຈະໄດ້ຮັບການປັບປຸງ ແລະ ໂພສລົງສື່ອອນລາຍ ເພື່ອເປັນການລົນນະລົງເຖິງຜົນກະທົບຕໍ່ກັບສິ່ງແວດລ້ອມທີ່ກຳລັງເກີດຂຶ້ນໃນປັດຈຸບັນ.





## ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ນັກຂ່າວຈາກ ໂຄງການ GAMCIL ເຂົ້າຮ່ວມກອງປະຊຸມສຳມະນາເຜີຍແຜ່ ຜົນໄດ້ຮັບຂອງການວິໄຈແບບມີສ່ວນຮ່ວມ ຂອງໂຄງການ We-ACT



ກອງປະຊຸມສຳມະນາເຜີຍແຜ່ຜົນໄດ້ຮັບຂອງການວິໄຈແບບມີສ່ວນຮ່ວມໂດຍນຳໃຊ້ເຄື່ອງມື ສຽງຈາກຮູບພາບ ຂອງ ໂຄງການ ສ້າງຄວາມເຂັ້ມແຂງໃນຊຸມຊົນເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແບບມີສ່ວນຮ່ວມ (We-ACT) ໄດ້ຈັດຂຶ້ນໃນລະຫວ່າງ ວັນທີ 17-18 ກັນຍາ 2025 ທີ່ ນະຄອນຫຼວງວຽງຈັນ ໂດຍມີຕາງໜ້າຈາກ ສະມາຄົມນັກນັກຂ່າວລາວ ແລະ ຜູ້ເຂົ້າຮ່ວມຈາກໂຄງການ GAMCIL ທີ່ໄດ້ເຂົ້າຮ່ວມ.



ການຈັດສຳມະນາໃນຄັ້ງນີ້ແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ຮ່ວມມືກັນໃນການສ້າງຊີວະນາໆພັນໃນປະເທດລາວໃນອານາຄົດ ແລະ ການປະກອບສ່ວນຂອງເຄືອຂ່າຍການສຶກສາສິ່ງແວດລ້ອມ ໃນການອານຸລັກຊີວະນາໆພັນພ້ອມທັງເຜີຍແຜ່ຜົນວິໄຈແບບມີສ່ວນຮ່ວມຂອງບົດບາດຍິງຊາຍ ໃນການປັບຕົວຕໍ່ສະພາບດິນຟ້າອາກາດ ເພື່ອຢາກໃຫ້ສັງຄົມໄດ້ເຫັນເຖິງພາວະຄວາມເປັນຜູ້ນຳຂອງແມ່ຍິງຊົນເຜົ່າໃນຊົນນະບົດ ເພາະການພັດທະນາຊຸມຊົນ ແລະ ການປັບຕົວຕໍ່ສະພາບດິນຟ້າອາກາດແມ່ນມີຄວາມຈຳເປັນຕໍ່ກັບການດຳລົງຊີວິດ, ສົ່ງເສີມການສຶກສາຢ່າງເທົ່າທຽມ ແລະ ມີຄຸນນະພາບ ເຊິ່ງຜົນການວິໄຈແມ່ນໄດ້ໃຫ້ຊຸມຊົນ ໄດ້ມີສ່ວນຮ່ວມເພື່ອເປີດໂອກາດໃຫ້ແມ່ຍິງໄດ້ສະທ້ອນມຸມມອງ, ປະສົບການ ແລະ ວິໄສທັດຕໍ່ກັບສະພາບດິນຟ້າອາກາດຜ່ານຮູບພາບ.





## ໂຄງການ GAMCIL ໄດ້ຕ້ອນຮັບຄະນະຜູ້ແທນ ອົງການ ແຄ໌ຣ ສາກົນ



ໂຄງການ GAMCIL ໄດ້ຕ້ອນຮັບຄະນະຜູ້ແທນ ອົງການ ແຄ໌ຣ ນານາຊາດ ນຳໂດຍທ່ານ ຣາເນວ ເດຊິວາ ຫົວໜ້າບໍລິຫານ ແລະ ການເງິນ ອົງການແຄ໌ຣ ອາເມລິກາ ,ທ່ານ ຣາເມດ ຊິງ ຜູ້ອຳນວຍການປະຈຳຫ້ອງການພາກພື້ນ ອົງການ ແຄ໌ຣ ປະຈຳລາວ ແລະ ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ ຫົວໜ້າອົງການແຄ໌ຣ ປະຈຳ ສ ປປ ລາວ ພ້ອມດ້ວຍ ຄະນະ ໄດ້ເຂົ້າຢ້ຽມຢາມການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ຢູ່ສະຖານີ ວິທະຍຸ ແຂວງຫຼວງພະບາງ ແລະ ໄດ້ເຂົ້າພົບປະແລກປ່ຽນບົດຮຽນ ກັບຄະນະອຳນວຍການ ວິທະຍຸ-ໂທລະພາບແຂວງ. ມີບັນດາພະນັກງານ-ສື່ມວນຊົນ ພາຍໃນສະຖານີເຂົ້າຮ່ວມ.



ຈາກນັ້ນ ຄະນະຜູ້ແທນ ອົງການ ແຄ໌ຣ ກໍ່ໄດ້ຢ້ຽມຊົມ ການດຳເນີນລາຍການໃນຫ້ອງຈັດລາຍການ ສະຖານີ ວິທະຍຸກະຈາຍສຽງ ແຂວງ ພ້ອມດຽວກັນນີ້ ທ່ານ ຣາເນວ ເດຊິວາ ຫົວໜ້າບໍລິຫານ ແລະ ການເງິນ ອົງການແຄ໌ຣ ອາເມລິກາ ຍັງໄດ້ຮ່ວມຈັດລາຍງານ ກັບໂຄສົກ ລາຍການ ຢູ່ສະຖານີ ວິທະຍຸ ຕື່ມອີກ







## ກອງປະຊຸມປຶກສາຫາລື ແລະ ອອກແບບເງື່ອນໄຂການປະກວດແຂ່ງຂັນຜະລິດຕະພັນສື່ສີຂຽວ

ໃນວັນທີ 14 ຕຸລາ 2025 ທີ່ຜ່ານມາ, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ສຳເລັດກອງປະຊຸມ ອອກແບບແຂ່ງຂັນຜະລິດຕະພັນສື່ກ່ຽວກັບການພັດທະນາສີຂຽວ ພາຍໃຕ້ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມ ຂອງອົງການ ຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ທີ່ນະຄອນຫຼວງວຽງຈັນ ໂດຍມີຜູ້ເຂົ້າຮ່ວມ 14 ຄົນ, ຍິງ 4 ຄົນ.




ຈຸດປະສົງກໍແມ່ນເພື່ອຮ່ວມກັນອອກແບບເງື່ອນໄຂ ແລະ ມາດຕະຖານ ຂອງການປະກວດແຂ່ງຂັນຂຽນຂ່າວ ໃຫ້ມີຄວາມສົມບູນຫຼາຍຂຶ້ນ ສຳລັບ 3 ກຸ່ມເປົ້າໝາຍຄື: ນັກຂ່າວພາກລັດ, ພາກອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ ແລະ ສິ່ງສຳຄັນແມ່ນ ຈະຊ່ວຍໃຫ້ພວກເຂົາສາມາດຜະລິດສື່ກ່ຽວກັບການພັດທະນາສີຂຽວ ທີ່ມີຄຸນະພາບ ແລະ ຖືກຕ້ອງຕາມຈຸດປະສົງຂອງໂຄງການ. ເຊິ່ງການປະກວດຈະໄດ້ໂພສແຂ່ງຂັນທາງອອນລາຍ ເພື່ອໃຫ້ຜູ້ທີ່ມີຄວາມສົນໃຈສາມາດສົ່ງຜົນງານສະໝັກເຂົ້າມາແຂ່ງຂັນໄດ້.






## ຂະບວນທັດສະນະສຶກສາ ຂອງຕາງໜ້ານັກຂ່າວພາກໃຕ້ ໂຄງການ GAMCIL



ໃນວັນທີ 16-17 ຕຸລາ 2025 ທີ່ຜ່ານມາ ນັກຂ່າວພາກໃຕ້ໄດ້ມີໂອກາດພິເສດໃນການຂະຫຍາຍວິໄສທັດດ້ານການລາຍງານຂ່າວສີຂຽວ ກໍຄືການທັດສະນະສຶກສາ ທີ່ນໍ້າຕົກຕາດເຍືອງ ແລະ ມິນຕາແຄມປິ້ງ ໂດຍມີຜູ້ເຂົ້າຮ່ວມທັງໝົດໃນ 23 ຄົນ, ຍິງ 12 ຄົນ.

ຈາກຕົວແທນນັກຂ່າວພາກເໜືອ, ພາກກາງ ແລະ ພາກໃຕ້. ຈຸດປະສົງກໍແມ່ນເພື່ອເປັນການເປີດມຸມມອງໃຫ້ກັບນັກຂ່າວ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໂດຍເນັ້ນໃສ່ຫົວຂໍ້“ການທ່ອງທ່ຽວແບບອະນຸລັກ”.



ໂຄງການໄດ້ຈັດໃຫ້ມີການເກັບກໍາຂໍ້ມູນ ແລະ ສໍາພາດ ເພື່ອສຶກສາເຖິງການເຮັດເສດຖະກິດທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ ເຊິ່ງແຕ່ລະກິດຈະກໍາ ໄດ້ສ້າງໃຫ້ມີກິດຈະກໍາຮ່ວມກັນ ເພື່ອສ້າງຄວາມສາມັກຄີລະຫວ່າງນັກຂ່າວ ແລະ ຍັງເປັນການເສີມສ້າງທັກສະດ້ານການລົງເກັບກໍາຂໍ້ມູນຂ່າວສິ່ງແວດລ້ອມໃຫ້ແກ່ນັກຂ່າວອີກດ້ວຍ.




## ຝຶກອົບຮົມ ບົດບາດ ແລະ ຄວາມສະເໝີພາບທາງເພດ ໃຫ້ແກ່ນັກຂ່າວພາກເໜືອ



ວັນທີ 21 ຕຸລາ 2025, ໂຄງການ GAMCIL ໄດ້ຈັດການຝຶກອົບຮົມຄູຝຶກ ໃນຫົວຂໍ້ "ບົດບາດ ແລະ ຄວາມສະເໝີພາບທາງເພດ" ຂຶ້ນທີ່ ເມືອງຫຼວງພະບາງ ແຂວງຫຼວງພະບາງ ເພື່ອສົ່ງເສີມຄວາມເຂົ້າໃຈໃນເລື່ອງບົດບາດທາງເພດ ແລະ ການນໍາໃຊ້ໃນວຽກງານສື່ສານຂອງນັກຂ່າວ ໂດຍມີຜູ້ເຂົ້າຮ່ວມ 20 ຄົນ, ຍິງ 12 ຄົນ. ການຮຽນຮູ້ໄດ້ດໍາເນີນໃນຮູບແບບການສົນທະນາເປັນກຸ່ມ, ການແລກປ່ຽນປະສົບການ ແລະ ການວິເຄາະກໍລະນີຕົວຢ່າງຈາກສື່ຈິງ ເພື່ອເຂົ້າໃຈບົດບາດຂອງເພດໃນສັງຄົມ ແລະ ໃນຂ່າວສານຢ່າງລຶກຊຶ້ງ.



ຈຸດປະສົງຫຼັກຂອງການຝຶກອົບຮົມຄື ການເພີ່ມພູນຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຄວາມສະເໝີພາບທາງເພດ ໃຫ້ແກ່ນັກຂ່າວ ເພື່ອໃຫ້ສາມາດນໍາໄປປະຍຸກໃຊ້ໃນການຜະລິດເນື້ອຫາຂ່າວ ແລະ ສື່ສານຢ່າງມີຈິດສໍານຶກທາງເພດ. ຜົນຈາກການຝຶກອົບຮົມ ໄດ້ຊ່ວຍໃຫ້ນັກຂ່າວທີ່ເຂົ້າຮ່ວມມີຄວາມໝັ້ນໃຈຫຼາຍຂຶ້ນໃນການສື່ສານຢ່າງມີຄວາມຮັບຜິດຊອບ ແລະ ສາມາດນໍາຄວາມຮູ້ໄປຂະຫຍາຍຜົນໃນວຽກງານ ແລະ ໃນຊຸມຊົນຂອງຕົນໄດ້ຢ່າງມີປະສິດທິຜົນ.




## ຂະບວນທັດສະນະສຶກສາ ຂອງຕາງໜ້ານັກຂ່າວພາກເໜືອ ໂຄງການ GAMCIL

ໃນວັນທີ 22-23 ຕຸລາ 2025 ທີ່ຜ່ານມາ ນັກຂ່າວພາກເໜືອໄດ້ມີໂອກາດພິເສດໃນການຂະຫຍາຍວິໄສທັດດ້ານການລາຍງານຂ່າວສີຂຽວ ກໍຄືການທັດສະນະສຶກສາທີ່ນ້ຳຕົກຕາດກວາງຊີ ແລະ ບໍລິສັດ AgCoTech Laos ໂດຍມີຜູ້ເຂົ້າຮ່ວມທັງໝົດ 20 ຄົນ, ຍິງ 12 ຄົນ ຈາກຕົວແທນນັກຂ່າວພາກເໜືອ, ພາກກາງ ແລະ ພາກໃຕ້.



ຈຸດປະສົງກໍແມ່ນເພື່ອເປັນການເປີດມຸມມອງໃຫ້ກັບນັກຂ່າວ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໂດຍເນັ້ນໃສ່ຫົວຂໍ້ "ການທ່ອງທ່ຽວແບບອະນຸລັກ".

ໂຄງການໄດ້ຈັດໃຫ້ມີການເກັບກຳຂໍ້ມູນ ແລະ ສຳພາດເພື່ອສຶກສາເຖິງການເຮັດເສດຖະກິດທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ, ການນຳໃຊ້ຝຸ່ນຊີວະພາບຈາກອາຈົມຂອງສັດ, ການຜະລິດເກືອແຮ່ທາດ ສຳລັບສັດລ້ຽວເອື້ອງ ເຊິ່ງເປັນປະໂຫຍດຕໍ່ກັບສັດ ແລະ ຊ່ວຍບໍ່ໃຫ້ສັດຜະລິດກາສມີເທນ ທີ່ເປັນໜຶ່ງໃນກາສເຮືອນແກ້ວ.



ນອກຈາກນັ້ນ, ກໍ່ຍັງໄດ້ສ້າງກິດຈະກຳຄວາມສາມັກຄີລະຫວ່າງນັກຂ່າວດ້ວຍກັນ ແລະ ຍັງເປັນການເສີມສ້າງທັກສະດ້ານການລົງເກັບກຳຂໍ້ມູນຂ່າວສິ່ງແວດລ້ອມໃຫ້ແກ່ນັກຂ່າວອີກດ້ວຍ.



## ພິທີປະກາດຜົນການແຂ່ງຂັນ ຜະລິດສື່ສີຂຽວ ປະຈຳປີ 2025

ໃນວັນທີ 27-31 ຕຸລາ 2025 ສະມາຄົມນັກຂ່າວແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດການຝຶກອົບຮົມ ໃຫ້ແກ່ຜູ້ນຳໃຊ້ສື່ອອນລາຍຄົນທົ່ວໄປ ພາຍໃຕ້ໂຄງການ GAMCIL ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 40 ຄົນ, ຍິງ 23 ຄົນ,ຜູ້ເຂົ້າຮ່ວມຈາກຫຼວງພະບາງ 1 ຄົນ, ສະຫວັນນະເຂດ 1 ຄົນ, ແຂວງວຽງຈັນ 1 ຄົນ, ຜົ້ງສາລີ 1 ຄົນ ແລະ ຈຳປາສັກ 2 ຄົນ.




ຈຸດປະສົງຂອງການຝຶກອົບຮົມ ແມ່ນເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມມີຄວາມເຂົ້າໃຈຫຼາຍຂຶ້ນຕໍ່ກັບບັນຫາສິ່ງແວດລ້ອມທີ່ເກີດຂຶ້ນ, ເພື່ອຮຽນຮູ້ການສ້າງເນື້ອຫາ ແລະ ເຕັກນິກການຜະລິດເນື້ອຫາ ຜ່ານເຄື່ອງມືດິຈິຕອນ, ເຂົ້າໃຈໃນຄວາມສຳຄັນ ຂອງຄວາມສະເໝີພາບທາງເພດ ຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ການສ້າງແຜນຜະລິດແຄມເປນກ່ຽວກັບການພັດທະນາສີຂຽວ.



ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມທຸກຄົນກໍ່ໄດ້ຜະລິດເນື້ອໃນ ທີ່ເປັນທັງໂປສເຕີ້ ແລະ ວິດີໂອສັ້ນທີ່ກ່ຽວກັບບັນຫາສິ່ງແວດລ້ອມ ແລະ ແນະນຳແນວທາງການຮັບມື ແລະ ປ້ອງກັນບັນຫາດັ່ງກ່າວ ໂດຍນຳໃຊ້ເຄື່ອງມືດິຈິຕອນ ບໍ່ວ່າຈະເປັນ Canva, Gemini, google studio, SUNO ແລະ ເຄື່ອງມືອື່ນໆ ເຂົ້າຊ່ວຍໃນການຜະລິດ.

## ພິທີປະກາດຜົນການແຂ່ງຂັນ ຜະລິດສື່ສີຂຽວ ປະຈໍາປີ 2025

ພິທີມອບລາງວັນ ໄດ້ຈັດຂຶ້ນໃນວັນທີ 18 ພະຈິກ 2025 ທີ່ ນະຄອນຫຼວງວຽງຈັນ. ໄດ້ຮັບກຽດຈາກຜູ້ເຂົ້າຮ່ວມເປັນປະທານໂດຍ ທ່ານ ສົມສະຫວາດ ພົງສາ, ຫົວໜ້າກົມສື່ມວນຊົນ, ຄະນະໂຄສະນາອົບຮົມສູນກາງພັກ, ທ່ານ ມາກ ກາລາເຣີ, ເອກອັກຄະລັດຖະທູດ ສະຫະພາບ ເອີຣົບ ປະຈໍາ ລາວ, ທ່ານ ສະຫວັນຄອນ ຣາຊມົນຕຣີ, ປະທານສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ, ຜູ້ອໍານວຍການ ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ.




ພວກເຮົາຂໍສະແດງຄວາມຍິນດີນໍາ ຜູ້ຊະນະເລີດ ຈາກກຸ່ມນັກຂ່າວພາກລັດຖະບານ, ກຸ່ມພາກອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ນໍາໃຊ້ສື່ອອນລາຍທົ່ວໄປ ຈາກການສົ່ງບົດເຂົ້າປະກວດມາທັງໝົດຫຼາຍກວ່າ200 ບົດ ຢູ່ໃນທົ່ວປະເທດ ເຮັດໃຫ້ພວກເຮົາສາມາດໄດ້ຜູ້ປະຊະນະຈາກແຕ່ລະປະເພດຄື:

**ປະເພດຂ່າວວີດີໂອ:**

ທ່ານ ນາງ ປານີ ວິໄລຈິດ, ວິທະຍຸ-ໂທລະພາບ ແຂວງຫຼວງພະບາງ

ທ່ານ ນາງ ກິນນາລີ ສາຍທະວີ, ວິທະຍາໄລເຕັກນິກປາກປ່າສັກ

**ປະເພດຂ່າວໂປສເຕີ້:**

ທ່ານ ນາງ ພູນມະໂນ ຫຼ່ຽມໄຊຍະຈັກ, ໜັງສືພິມເສດຖະກິດ-ສັງຄົມ

ທ່ານ ນາງ ທິບພະຈັນ ພູດາວົງ, ສະມາຄົມ ເພື່ອການສະໜັບສະໜູນ ແລະ ປັບປຸງຊົນນະບົດ




ຜູ້ທີ່ໄດ້ຮັບລາງວັນຊະນະເລີດ ແລະ ຮອງຊະນະເລີດ ຈະໄດ້ຮັບໂອກາດໄປຝຶກອົບຮົບ ແລະ ທັດສະນະສຶກສາ ທີ່ ປະເທດ ສສ ຫວຽດນາມ ເຊິ່ງສິ່ງນີ້ຈະຊ່ວຍເຮັດໃຫ້ຜູ້ເຂົ້າຮ່ວມທຸກຄົນ ໄດ້ຮັບການເພີ່ມທັກສະຄວາມສາມາດທັງດ້ານຄວາມຮູ້ ແລະ ການນໍາໃຊ້ເຄື່ອງມືດິຈິຕອນເຂົ້າຊ່ວຍໃນການຜະລິດສື່ສີຂຽວ ໄດ້ຢ່າງຊໍານານຫຼາຍຂຶ້ນ.



ສຸໄພລິນ ອິນພູວຽງ ຈາກສະຖານີວິທະຍຸ-ໂທລະພາບແຂວງອຸດົມໄຊ ເປັນຜູ້ທີ່ມີໃຈຮັກໃນການສື່ສານ ແລະ ການພັດທະນາຊຸມຊົນມາໂດຍຕະຫຼອດ. ຜ່ານການເຮັດວຽກໃນວົງການສື່ຂ່າວ, ນາງໄດ້ເຫັນວ່າຊີວິດຂອງປະຊາຊົນເຊື່ອມໂຍງກັບສິ່ງແວດລ້ອມແນວໃດ ແລະ ການຂາດຄວາມຮູ້ອາດສ້າງຜົນກະທົບແບບໃດໃນລະຍະຍາວ.

ໃນປີ 2025 ລາວໄດ້ເຂົ້າຮ່ວມການອົບຮົມ “ການລາຍງານປະເດັນສິ່ງແວດລ້ອມ” ພາຍໃຕ້ໂຄງການ GAMCIL ທີ່ໄດ້ຮັບທຶນສະໜັບສະໜູນຈາກສະຫະພາບເອີຣົບ (EU).

ການອົບຮົມນີ້ໄດ້ເປີດໂລກກະທັດຫັດໃຫ້ລາວໄດ້ເຫັນວ່າ: ການລາຍງານຂ່າວດ້ານສິ່ງແວດລ້ອມສາມາດສ້າງແຮງບັນດານໃຈໃຫ້ຜູ້ຄົນລຸກຂຶ້ນມາປົກປ້ອງໂລກດ້ວຍວິທີໃດ. “ແຕ່ກ່ອນຂ້ອຍນັ້ນ ສ່ວນໃຫຍ່ລາຍງານຂ່າວທົ່ວໄປ, ແຕ່ຫຼັງຈາກການອົບຮົມນີ້ ຂ້ອຍໄດ້ເຫັນຄວາມສຳຄັນຂອງການເລົ່າເລື່ອງສິ່ງແວດລ້ອມໃນຮູບແບບທີ່ຈຸດປະກາຍການປ່ຽນແປງໄດ້,” ລາວກ່າວ.



**ສຸໄພລິນ ອິນພູວຽງ: ສົ່ງເສີມການປ່ຽນແປງ ຜ່ານການເລົ່າເລື່ອງສິ່ງແວດລ້ອມ**




**ສຸໄພລິນ ອິນພູວຽງ: ສົ່ງເສີມການປ່ຽນແປງ ຜ່ານການເລົ່າເລື່ອງສິ່ງແວດລ້ອມ**

ທ່ານ ໂພສິນ ໄດ້ເຂົ້າຮ່ວມການຝຶກອົບຮົມນັກຂ່າວພົນລະເມືອງດ້ານຄວາມສະເໝີພາບຍິງ-ຊາຍ ແລະ ສິ່ງແວດລ້ອມສີ່ສີຂຽວ ເພື່ອເຂົ້າໃຈການປ່ຽນແປງຂອງສິ່ງແວດລ້ອມ ແລະ ການເຊື່ອມໂຍງລະຫວ່າງຄວາມຮັບຜິດຊອບສ່ວນບຸກຄົນ, ຄອບຄົວ, ແລະ ຊຸມຊົນໃຫ້ດີຂຶ້ນ.

ກ່ອນການຝຶກອົບຮົມ, ລາວໄດ້ສັງເກດເຫັນບັນຫາທ້າທາຍໃນຊຸມຊົນຂອງຕົນ, ເຊັ່ນ: ນັກສຶກສາຖິ້ມຂີ້ເຫຍື້ອຊະຊາຍ ແລະ ການປະຕິບັດທີ່ບໍ່ສອດຄ່ອງກັນ, ເຊິ່ງກະຕຸ້ນໃຫ້ລາວຊອກຫາວິທີແກ້ໄຂ.ຜ່ານການຝຶກອົບຮົມ, ອາຈານ ໂພສິນ ໄດ້ເພີ່ມຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ບົດບາດຂອງແມ່ຍິງໃນສັງຄົມ.

ການໄປທັດສະນະສຶກສາໄດ້ເຮັດໃຫ້ລາວໄດ້ສຳຜັດກັບທຳມະຊາດ ເຊັ່ນ: ສາຍນ້ຳທີ່ສະອາດ, ສັດປ່າ, ແລະ ປ່າໄມ້ອັນອຸດົມສົມບູນ, ເຊິ່ງໄດ້ເສີມສ້າງຄວາມສຳຄັນຂອງການຮັບຮູ້ດ້ານສິ່ງແວດລ້ອມ. ການສົນທະນາ ແລະ ການໂຕ້ວາທີໄດ້ຊ່ວຍໃຫ້ລາວວິເຄາະບັນຫາຕ່າງໆຢ່າງມີວິຈາລະນາຍານ ແລະ ເຫັນຄຸນຄ່າຂອງທັດສະນະທີ່ແຕກຕ່າງກັນ.






# ສົ່ງເສີມສຽງສີຂຽວ — ການເດີນທາງ ຂອງ ປານີ ວິໄລຈິດ ສູ່ການປ່ຽນແປງສິ່ງແວດລ້ອມ

ໃນທີ່ງຽບສະຫງົບຂອງແຂວງຫຼວງພະບາງ, ປານີ ວິໄລຈິດ, ໄວໜຸ່ມຍິງທີ່ມີຄວາມມັກໃນການເລົ່າເລື່ອງ, ໄດ້ຄົ້ນພົບຈຸດປະສົງໃໝ່ຜ່ານການ ຝຶກອົບຮົມນັກຂ່າວສີຂຽວ ພາຍໃຕ້ໂຄງການ GAMCIL, ເຊິ່ງໄດ້ຮັບການສະໜັບສະໜູນຈາກສະຫະພາບເອີຣົບ. ກ່ອນເຂົ້າຮ່ວມໂຄງການ, ປານີ ມີໂອກາດຈຳກັດໃນການແບ່ງປັນແນວຄິດກ່ຽວກັບບັນຫາສິ່ງແວດລ້ອມ. ນາງໄດ້ກ່າວວ່າ: “ຂ້ອຍຢາກຍົກສູງຄວາມຮັບຮູ້ຢູ່ສະເໝີ, ແຕ່ບໍ່ຮູ້ວ່າຈະເຮັດແນວໃດໃຫ້ຄົນຟັງ.”

ການຝຶກອົບຮົມໄດ້ປ່ຽນແປງທຸກສິ່ງຢ່າງ. ຜ່ານການຝຶກປະຕິບັດຕົວຈິງ, ການໃຫ້ຄຳແນະນຳ, ແລະ ການຮ່ວມມືກັບຜູ້ເຂົ້າຮ່ວມອື່ນໆ, ປານີ ໄດ້ຮຽນຮູ້ວິທີການລາຍງານເລື່ອງລາວສິ່ງແວດລ້ອມທີ່ສ້າງແຮງບັນດານໃຈໃຫ້ເກີດການກະທຳ. ນາງກ່າວດ້ວຍຄວາມພູມໃຈວ່າ: “ຂ້ອຍໄດ້ຮຽນຮູ້ວິທີເຊື່ອມໂຍງຂໍ້ເທັດຈິງກ່ຽວກັບເລື່ອງລາວຂອງມະນຸດ, ແລະ ໂດຍນຳໃຊ້ຮູບພາບ ແລະ ວິດີໂອ ເພື່ອໃຫ້ຄົນເຂົ້າສົນໃຈທຳມະຊາດ.”

ເລື່ອງລາວທຳອິດຂອງນາງ ກ່ຽວກັບກະສິກຳແບບຍືນຍົງໃນຊຸມຊົນຂອງນາງ ໄດ້ຖືກເຜີຍແຜ່ໃນສື່ມວນຊົນທ້ອງຖິ່ນ, ເຊິ່ງໄດ້ດຶງດູດຄວາມສົນໃຈຕໍ່ຊາວກະສິກອນທີ່ປົກປ້ອງທີ່ດິນ ແລະ ປ່າໄມ້ຂອງພວກເຂົາ. ການເຫັນເລື່ອງລາວຂອງຕົນຖືກແບ່ງປັນຢ່າງກວ້າງຂວາງ ໄດ້ເຮັດໃຫ້ນາງມີຈຸດປະສົງອັນແຮງກ້າ ແລະ ມີຄວາມຫວັງ. ປານີ ຍິ້ມ ແລະ ກ່າວວ່າ: “ດຽວນີ້, ຂ້ອຍເຊື່ອວ່າສຽງຂອງຂ້ອຍສາມາດສ້າງຄວາມແຕກຕ່າງໄດ້. ພຽງແຕ່ການກະທຳເລັກນ້ອຍກໍ່ສາມາດສ້າງການປ່ຽນແປງໄດ້ ເມື່ອເຮົາແບ່ງປັນມັນ.”



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**

ພວກເຮົາປາຖະໜາເຫັນໂລກນີ້ເຕັມໄປດ້ວຍຄວາມຫວັງ, ການໃຫ້ອະໄພ, ສັງຄົມມີຄວາມຍຸຕິທຳ, ຫຼຸດພົ້ນຈາກຄວາມທຸກຍາກ ແລະ ປະຊາຊົນດຳລົງຊີວິດຢູ່ຢ່າງປອດໄພ ແລະ ມີກຽດສັກສີ.

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ -ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023